ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************

ກະຊວງການເງິນ

ກົມພາສີ

ເລກທີ 06540/ກພສ

ນະຄອນຫຼວງວຽງຈັນ, ວັນທີ 06 JUN 2016

## ແຈ້ງການແນະນຳ

ເຖິງ: - ພະແນກການກົມພາສີ

- ດ່ານພາສີຊາຍແດນ
- ກອງກວດກາພາສີແຂວງ, ນະຄອນຫຼວງ

ເລື່ອງ: **ການຈັດຕັ້ງປະຕິບັດ ອັດຕາອາກອນຊົມໃຊ້ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 70/ສພ, ລົງວັນທີ 15 ທັນວາ 2015.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 70/ສພ, ລົງວັນທີ 15 ທັນວາ 2015; ແຈ້ງການປະກາດໃຊ້ກົດໝາຍຂອງ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 1530/ກງ, ລົງວັນທີ 20 ພຶດສະພາ 2016.

ເພື່ອຮັບປະກັນການຈັດຕັ້ງປະຕິບັດອາກອນຊົມໃຊ້ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ໃຫ້ມີຄວາມເອກະພາບໃນຂອບເຂດທົ່ວປະເທດ, ກົມພາສີ ອອກແຈ້ງການແນະນຳ, ຄື :

1. ລາຍການສິນຄ້າ ທີ່ມີອາກອນຊົມໃຊ້ ຈຳນວນ 19 ລາຍການ ໃນອັດຕາແຕ່ 3% ຫາ 90% ແມ່ນໃຫ້ປະຕິບັດຕາມມາດຕາ 20 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 70/ສພ, ລົງວັນທີ 15 ທັນວາ 2015 ຢ່າງເຂັ້ມງວດ.
2. ການຈັດເລກລະຫັດສິນຄ້າ, ເຄື່ອງຂອງ ສຳລັບລາຍການສິນຄ້າທີ່ມີອາກອນຊົມໃຊ້ ຈຳນວນ: 985 ລະຫັດ ແມ່ນໄດ້ກຳນົດລົງໃນລະບົບການແຈ້ງພາສີແບບອີເລັກໂຕຣນິກ (ອາຊີກູດາ).
3. ລາຍການສິນຄ້າ ທີ່ມີອາກອນຊົມໃຊ້ ຈຳນວນ 68 ລະຫັດ ເປັນຕົ້ນ : ເຄື່ອງດື່ມສຳເລັດຮູບ, ເຄື່ອງປະດັບທີ່ເຮັດດ້ວຍຄິຣສຕັລ, ຜ້າພົມ, ຊຸດໂຟນີເຈີ ແລະ ອື່ນໆ ໄດ້ເປີດໄວ້ໃຫ້ຜູ້ປະກອບການ ເປັນຜູ້ແຈ້ງອັດຕາ

ອາກອນຊົມໃຊ້ ດ້ວຍຕົນເອງ ໃນເວລາປະກອບຂໍ້ມູນໃບແຈ້ງພາສີເປັນລາຍລະອຽດ ລົງໃນລະບົບອາຊີກູດາ, ເນື່ອງຈາກ ລາຍການສິນຄ້າດັ່ງກ່າວ ໜຶ່ງເລກລະຫັດສິນຄ້າ ທີ່ກໍານົດໃນປື້ມສາລະບານລະບົບເອກພາບອາຊຽນ ແມ່ນກວມເອົາຫລາຍອັດຕາອາກອນຊົມໃຊ້. (ລາຍລະອຽດ ແມ່ນຄັດຄຶດຕາຕະຕາງອັດຕາອາກອນຊົມໃຊ້ ດ້ານຫລັງ).

4. ມອບໃຫ້ບັນດາພະແນກການກົມພາສີ, ດ່ານພາສີຊາຍແດນ ແລະ ກອງກວດກາພາສີແຂວງແລະນະຄອນຫລວງ ເອົາໃຈໃສ່ເຜີຍແຜ່, ອະທິບາຍ ແຈ້ງການແນະນໍາສະບັບນີ້ ໃຫ້ຜູ້ປະກອບການຊາບ ແລະເຂົ້າໃຈເປັນເອກະພາບ ເພື່ອພ້ອມກັນຈັດຕັ້ງປະຕິບັດ.
5. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາຫຍຸ້ງຍາກ ໃຫ້ນໍາສະເໜີກົມພາສີ (ພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ) ເພື່ອຄົ້ນຄ້ວາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ

ບ່ອນສົ່ງ:

- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການເງິນ — 1 ສະບັບ "ໃຊ້ຕາງລາຍງານ"
- ທ່ານ ຮອງລັດຖະມົນຕີກະຊວງການເງິນ, ຜູ້ຊີ້ນໍາ — 1 ສະບັບ "ໃຊ້ຕາງລາຍງານ"
- ກົມສ່ວຍສາອາກອນ — 1 ສະບັບ "ເພື່ອຊາບ"
- ຫ້ອງການກະຊວງອຸດສະຫະກໍາແລະການຄ້າ — 1 ສະບັບ "ເພື່ອຊາບ"
- ສະພາການຄ້າ ແລະ ອຸດສາຫະກໍາ — 1 ສະບັບ "ເພື່ອຊາບແລະເຜີຍແຜ່"
- ເກັບມ້ຽນສໍານົງາ — 1 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----------===000===----------

ກົມພາສີ
ພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ

E01992
ສະບັບເລກທີ: ______/ພລສ
ນະຄອນຫຼວງວຽງຈັນ, ວັນທີ 06 JUN 2016

## ຕາຕະລາງອັດຕາອາກອນຊົມໃຊ້ສຳລັບສິນຄ້າຂາເຂົ້າ ຕາມມາດຕາ 20 ຂອງກົດໝາຍສ່ວຍສາອາກອນສະບັບປັບປຸງ ເລກທີ 70/ສພຊ, ລົງວັນ 15 ທັນວາ 2015.

| ລ/ດ | ປະເພດສິນຄ້າທົ່ວໄປທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາທຽບຖານ ເປັນສ່ວນຮ້ອຍ (%) | | | ລະຫັດເກົ່າ / ລະຫັດບ່ອຍ ຂອງສິນຄ້າ | ສາມາດກຳນົດໃນລະບົບ ອາຊີກູດາ | ບໍ່ສາມາດກຳນົດໃນລະບົບ ອາຊີກູດາ | ໝາຍເຫດ |
|---|---|---|---|---|---|---|---|---|
| | | ປີ 2016-2017 | ປີ 2018 -2019 | ປີ 2020 ເປັນຕົ້ນໄປ | | | | |
| 1 | ນ້ຳມັນເຊື້ອໄຟ: | | | | | | | |
| | - ນ້ຳມັນແອັດຊັງພິເສດ | 35 | 39 | 39 | 2710.12.11.00 / 2710.12.12.00 | ✓ | | |
| | - ນ້ຳມັນແອັດຊັງທຳມະດາ | 30 | 34 | 34 | 2710.12.13.00 / 2710.12.14.00 | ✓ | | |
| | - ນ້ຳມັນກາຊວນ | 20 | 24 | 24 | 2710.19.71.00 / 2710.19.72.00 / 2710.19.72.79 | ✓ | | |
| | - ນ້ຳມັນກາດບິນ | 10 | 14 | 14 | 2710.12.20.00 / 2710.19.81.00 / 22710.19.82.00 | ✓ | | |
| | - ນ້ຳມັນເຄື່ອງ, ນ້ຳມັນໄຮໂດຣລິກ, ນ້ຳມັນໜຽວ, ນ້ຳມັນທ້າມລໍ້ | 5 | 9 | 9 | 2709.00.20.00 / 2710.19.41.00-2710.19.60.00 | ✓ | | |
| | | | | | | | | |
| 2 | ອາຍແກັສໃຊ້ສຳລັບພາຫະນະ | 10 | 10 | 10 | 2711.21.10.00 | ✓ | | |
| | | | | | | | | |
| 3 | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ: | | | | | | | ບາງລະຫັດສິນຄ້າແມ່ນກວມເອົາ 2 ອັດຕາ ອກຊ ຕົວຢ່າງ: ລະຫັດ 2204.21.13 (ເຫຼົ້າວາຍທີ່ມີທາດເຫຼົ້າເກີນ 15% ແຕ່ບໍ່ເກີນ 23%) |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຊາວ (20) ອົງສາຂຶ້ນໄປ | 30 | 50 | 70 | 22.04 - 22.08 | ✓ | ✓ | |
| | - ເຫຼົ້າ (ເຫຼົ້າແວງ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຕ່ຳກວ່າຊາວ (20) ອົງສາ | 25 | 45 | 60 | 22.04 - 22.08 | ✓ | ✓ | |
| | | | | | | | | |
| 4 | ເບຍ | 50 | 50 | 50 | 2203.00.10.00 / 2203.00.90.00 | ✓ | | |
| | | | | | | | | |
| 5 | ເຄື່ອງດື່ມສຳເລັດຮູບ: | | | | | | | 22.01 ນອກຈາກ 2201.90.90 ນ້ຳດື່ມ (ອກຊ 0%); 2202.90.90 ກວມ ມີ ເຄື່ອງດື່ມຊູກຳລັງ (ອກຊ 10%) ແລະ ເຄື່ອງດື່ມສຳເລັດຮູບອື່ນໆ (ອກຊ 5%) |
| | - ນ້ຳອັດລົມ, ໂຊດາ, ນ້ຳດື່ມແຮ່ທາດ, ນ້ຳໝາກໄມ້, ເຄື່ອງດື່ມປະເພດກາເຟ ແລະ ເຄື່ອງດື່ມຄ້າຍຄຽງ. | 5 | 5 | 5 | 20.09; 22.01 - 22.02 | ✓ | | |
| | - ເຄື່ອງດື່ມຊູກຳລັງ | 10 | 10 | 10 | 2202.90.90.00 | | ✓ | |
| | | | | | | | | |
| 6 | ປະເພດຢາສູບ: | | | | | | | |
| | - ຢາຊີກາ | 30 | 45 | 60 | 2402.90.10.00 | ✓ | | |
| | - ຢາສູບເປັນກອກ ຫຼື ເປັນຊອງ | 30 | 45 | 60 | 2402.20.10 - 2402.20.90 | ✓ | | |
| | - ຢາເສັ້ນສຳເລັດຮູບ | 15 | 25 | 35 | 2403.11 - 2403.19 | ✓ | | |
| | - ຢາສູບປະເພດອື່ນໆ | 30 | 45 | 60 | 24.01 - 24.03 | ✓ | | |

| ລ/ດ | ປະເພດສິນຄ້າທົ່ວໄປທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາທຽບຖານ ເປັນສ່ວນຮ້ອຍ (%) | | | ລະຫັດເກົ່າ / ລະຫັດຍ່ອຍ ຂອງສິນຄ້າ | ສາມາດກຳນົດ ໃນລະບົບ ອາຊີກູດາ | ບໍ່ສາມາດກຳນົດ ໃນລະບົບ ອາຊີກູດາ | ໝາຍເຫດ |
|---|---|---|---|---|---|---|---|---|
| | | ປີ 2016-2017 | ປີ 2018 -2019 | ປີ 2020 ເປັນຕົ້ນໄປ | | | | |
| 7 | ເຄື່ອງໃຊ້ ຫຼື ເຄື່ອງ ປະດັບກຣິສຕັລ | 20 | 20 | 20 | 70.13; 71.17 | ✓ | ✓ | - ບາງລາຍການທີ່ມີໄດ້ກຳນົດແຈ້ງໃນສາລະບານສິນຄ້າ ເຊັ່ນ ຈອກແກ້ວກຣິສຕັລ (70.13) - ບາງລາຍການສິນຄ້າ ເຊັ່ນເຄື່ອງປະດັບ ແມ່ນບໍ່ສາມາດກຳນົດລະຫັດສິນຄ້າທີ່ແນ່ນອນໄດ້ ເພາະຈັດລວມກັບເຄື່ອງປະດັບອື່ນໆ |
| 8 | ຜ້າພົມທຸກຊະນິດແຕ່ລະຜືນທີ່ມີລາຄາແຕ່ 1 (ໜຶ່ງ) ລ້ານກີບຂຶ້ນໄປ | 15 | 15 | 15 | 57.01 - 57.05 | | ✓ | ບໍ່ສາມາດກຳນົດລະຫັດສິນຄ້າທີ່ແນ່ນອນໄດ້ ເພາະຂຶ້ນກັບລາຄາສິນຄ້າ |
| 9 | ຊຸດເຟີນີເຈີ (ໂຊຟາ) ທີ່ມີມູນຄ່າແຕ່ 10 (ສິບ) ລ້ານກີບຂຶ້ນໄປ | 15 | 15 | 15 | 94.01 | | ✓ | ບໍ່ສາມາດກຳນົດລະຫັດສິນຄ້າທີ່ແນ່ນອນໄດ້ ເພາະຂຶ້ນກັບລາຄາສິນຄ້າ |
| 10 | ນ້ຳຫອມ ແລະ ອຸປະກອນຮັບໃຊ້ການເສີມສວຍ ແລະ ເສີມຄວາມງາມ | 20 | 20 | 20 | 33.03 - 33.04 | ✓ | ✓ | 3304.91.00 ລວມມີແປ້ງເດັກ (ອກຊ 0%) ແລະ ແປ້ງທາໜ້າ (ອກຊ 20%) |
| 11 | ໄພ້ ແລະ ເຄື່ອງຫຼີ້ນການພະນັນ ຖ້າຫາກໄດ້ຮັບອະນຸບາດຈາກຂະແໜງ ການກ່ຽວຂ້ອງ | 90 | 90 | 90 | 9504.40.00.00 | ✓ | | |
| 12 | ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ຖ້າຫາກໄດ້ຮັບອະນຸບາດຈາກຂະແໜງການກ່ຽວຂ້ອງ | 80 | 80 | 80 | 36.04 | ✓ | | |
| 13 | ພາຫະນະ: | | | | | | | |
| | 1. ລົດຈັກ: | | | | 87.11 | | | |
| | 1.1 ລົດຈັກ ທີ່ນຳໃຊ້ພະລັງງານເຊື້ອໄຟ: | | | | | | | |
| | ແຕ່ 110 ເຊເຊ ລົງມາ | 20 | 20 | 20 | 8711.10 - 8711.20 | ✓ | | |
| | ແຕ່ 111 ຫາ 150 ເຊເຊ | 30 | 30 | 30 | 8711.20 | ✓ | | |
| | ແຕ່ 151 ຫາ 250 ເຊເຊ | 40 | 40 | 40 | 8711.20 | ✓ | | |
| | ແຕ່ 251 ຫາ 500 ເຊເຊ | 60 | 60 | 60 | 8711.30 | ✓ | | |
| | ແຕ່ 501 ເຊເຊ ຂຶ້ນໄປ | 80 | 80 | 80 | 8711.40-8711.50 | ✓ | | |
| | 1.2 ລົດຈັກທີ່ນຳໃຊ້ພະລັງງານສະອາດ | 5 | 5 | 5 | 8711.10 - 8711.90 | ✓ | | |
| | 1.3 ຊິ້ນສ່ວນປະກອບ ແລະ ເຄື່ອງອະໄຫຼ່ປ່ຽນຖ່າຍລົດຈັກ | 5 | 5 | 5 | 3919.90.90; 40.11-40.13; 40.16; 73.20; 84.07; 84.08; 8509; 85.12; 85.39; 87.14; ... | ✓ | ✓ | ຍັງມີລະຫັດອື່ນໆອີກ |
| | 2. ລົດຍົນສີ່: | | | | | | | |
| | 2.1 ລົດຍົນສີ່ຂະໜາດນ້ອຍທີ່ນຳໃຊ້ພະລັງງານເຊື້ອໄຟ: ລົດເກັງ, ລົດຈີບ, ລົດຕູ້, ລົດກະບະ: | | | | | | | |
| | ແຕ່ 1000 ເຊເຊ ລົງມາ | 25 | 25 | 25 | 8703.21; 8703.31 | ✓ | | |

| ລ/ດ | ປະເພດສິນຄ້າທົ່ວໄປທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາພາສີ ເປັນສ່ວນຮ້ອຍ (%) | | | ລະຫັດເກົ່າ / ລະຫັດຍ່ອຍ ຂອງສິນຄ້າ | ສາມາດກຳນົດໃນລະບົບ ອາຊີກູດາ | ບໍ່ສາມາດກຳນົດໃນລະບົບ ອາຊີກູດາ | ໝາຍເຫດ |
|---|---|---|---|---|---|---|---|---|
| | | ປີ 2016-2017 | ປີ 2018 -2019 | ປີ 2020 ເປັນຕົ້ນໄປ | | | | |
| | ແຕ່ 1,001 ຫາ 1,600 ເຊເຊ | 30 | 30 | 30 | 8703.22; 8703.23; 8703.31; 8703.32 | ✓ | | |
| | ແຕ່ 1,601 ຫາ 2,000 ເຊເຊ | 35 | 35 | 35 | 8703.23; 8703.32 | ✓ | | |
| | ແຕ່ 2,001 ຫາ 2,500 ເຊເຊ | 40 | 40 | 40 | 8703.23; 8703.32 | ✓ | | |
| | ແຕ່ 2,501 ຫາ 3,000 ເຊເຊ | 45 | 45 | 45 | 8703.23; 8703.33 | ✓ | | |
| | ແຕ່ 3,001 ຫາ 4,000 ເຊເຊ | 70 | 70 | 70 | 8703.24; 8703.33 | ✓ | | |
| | ແຕ່ 4,001 ຫາ 5,000 ເຊເຊ | 80 | 80 | 80 | 8703.24; 8703.33 | ✓ | | |
| | ແຕ່ 5,001 ເຊເຊ ຂຶ້ນໄປ | 90 | 90 | 90 | 8703.24; 8703.33 | ✓ | | |
| | | | | | | | | |
| | 2.2 ລົດຂົນສົ່ງຂະໜາດນ້ອຍທີ່ນຳໃຊ້ພະລັງງານສະອາດ: ລົດເກັງ, ລົດຈິບ, ລົດຕູ້, ລົດກະບະ | 10 | 10 | 10 | 87.02 / 87.04 | ✓ | | |
| | 2.3 ລົດຂົນສົ່ງຂະໜາດນ້ອຍ (ລົດກະບະ 2 ປະຕູ) ທີ່ລວງຍາວຂອງກະບະຍາວກວ່າຫ້າສິບສ່ວນຮ້ອຍ (50%) ຂອງຄວາມຍາວແຕ່ໃຈກາງລໍ້ໜ້າຫາລໍ້ຫລັງ: | | | | 87.02 / 87.04 | ✓ | | |
| | - ທີ່ນຳໃຊ້ພະລັງງານເຊື້ອໄຟ | 10 | 10 | 10 | 87.02 / 87.04 | ✓ | | |
| | - ທີ່ນຳໃຊ້ພະລັງງານສະອາດ | 5 | 5 | 5 | 87.02 / 87.04 | ✓ | | |
| | | | | | | | | |
| | 2.4 ລົດຂົນສົ່ງຂະໜາດກາງ: | | | | | | | |
| | - ທີ່ນຳໃຊ້ພະລັງງານເຊື້ອໄຟ | 8 | 8 | 8 | 87.02 / 87.04 | ✓ | | |
| | - ທີ່ນຳໃຊ້ພະລັງງານສະອາດ | 5 | 5 | 5 | 87.02 / 87.04 | ✓ | | |
| | | | | | | | | |
| | 2.4 ລົດຂົນສົ່ງຂະໜາດໃຫຍ່: | | | | | | | |
| | - ທີ່ນຳໃຊ້ພະລັງງານເຊື້ອໄຟ | 8 | 8 | 8 | 87.02 / 87.04 | ✓ | | |
| | - ທີ່ນຳໃຊ້ພະລັງງານສະອາດ | 5 | 5 | 5 | 87.02 / 87.04 | ✓ | | |
| | | | | | | | | |
| | 3. ຊິ້ນສ່ວນປະກອບ ແລະ ເຄື່ອງອະໄຫຼ່ປ່ຽນຖ່າຍຂອງລົດຂົນສົ່ງທຸກຂະໜາດ | 5 | 5 | 5 | 3919.90.90; 40.11-40.13; 40.16; 73.20; 84.07; 84.08; 8509; 85.12; 85.39;87.08; ... | ✓ | ✓ | ຍັງມີລະຫັດອື່ນໆອີກ |
| | | | | | | | | |
| 14 | ເຄື່ອງຕົບແຕ່ງພາຫະນະ | 20 | 20 | 20 | | | ✓ | ຈັດບໍ່ໄດ້ເນື່ອງຈາກ ສ່ວນໃຫຍ່ແມ່ນມີລະຫັດດຽວກັນກັບຊິ້ນສ່ວນອະໄຫຼ່ |
| | | | | | | | | |
| 15 | ເຮືອໄວ, ເຮືອປັອດ, ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ ລວມທັງເຄື່ອງອະໄຫຼ່ ແລະ ເຄື່ອງປະກອບ | 20 | 20 | 20 | 89.03 | ✓ | | |
| | | | | | | | | |
| 16 | ເຄື່ອງຮັບສັນຍານໂທລະພາບຜ່ານດາວທຽມ, ເຄື່ອງຫຼິ້ນສຽງ ແລະ ພາບ, ກ້ອງຖ່າຍຮູບ, ໂທລະສັບ, ເຄື່ອງອັດສຽງ ແລະ ພາບ, ໂທລະທັດ, ເຄື່ອງດົນຕີລວມທັງອຸປະກອນ ແລະ ເຄື່ອງປະກອບຂອງເຄື່ອງດັ່ງກ່າວ | 20 | 20 | 20 | 8517.11 - 8517.18; 85.18 - 8521; 85.28; 8529.10.21-8529.10.29; 90.06; 92.01 - 92.09 | ✓ | | |
| | | | | | | | | |
| 17 | ເຄື່ອງໃຊ້ໄຟຟ້າ: ເຄື່ອງປັບອາກາດ, ເຄື່ອງຈັກຊັກຜ້າ, ເຄື່ອງດູດຝຸ່ນ, ຕູ້ເຢັນ, ຕູ້ແຊ່ | 20 | 20 | 20 | 84.15; 84.18; 84.50; 85.08; | ✓ | | |

| ລ/ດ | ປະເພດສິນຄ້າທົ່ວໄປທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາພາສີອາກອນ ເປັນສ່ວນຮ້ອຍ (%) | | | ລະຫັດເກົ່າ / ລະຫັດຍ່ອຍ ຂອງສິນຄ້າ | ສາມາດກຳນົດ ໃນລະບົບ ອາຊີກູດາ | ບໍ່ສາມາດກຳນົດ ໃນລະບົບ ອາຊີກູດາ | ໝາຍເຫດ |
|---|---|---|---|---|---|---|---|---|
| | | ປີ 2016-2017 | ປີ 2018 -2019 | ປີ 2020 ເປັນຕົ້ນໄປ | | | | |
| 18 | ໂຕະສະນຸກເກີ (ໂຕະບິນລຽດ Billiard), ອຸປະກອນໂບວລິ້ງ, ໂຕະຫຼິ້ນບານເຕະ | 30 | 30 | 30 | 9504.20.20-9504.20.90; 9504.90.10; 9504.90.94-9504.90.99 | ✓ | | |
| 19 | ເຄື່ອງຫຼິ້ນເກມທຸກປະເພດ | 35 | 35 | 35 | 9504.30.10-9504.30.90; 9504.50.00; 9504.90.31-9504.90.39; 9504.90.92-9504.90.99 | ✓ | | |

ຫົວໜ້າພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ

ພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ

ວົງຄຳແຫງ ວົງທະຈັກ

Vongkhamheng VONGTHACHACK